MNsure
Where you choose health coverage

# ການມອບອຳນາດໃຫ້ຜູ້ຊ່ວຍ/ຕົວແທນໃນການບັນທຶກ

ທ່ານໄດ້ເລືອກ _________________ ໃຫ້ເປັນຜູ້ຊ່ວຍຂອງທ່ານ ໃນການປະກອບໃບສະໝັກຂອງທ່ານ ແລະປັບປຸງໃບສະໝັກ MNsure ຂອງທ່ານໃຫ້ຄົບຖ້ວນ. ເພື່ອເປັນການຢືນຢັນວ່າຂໍ້ມູນຄົບຖ້ວນແລ້ວ ກະລຸນາຄລິກໃສ່ “Confirm” (ຢືນຢັນ), ໝາຍວ່າ ທ່ານໄດ້ອະນຸຍາດໃຫ້ຜູ້ຊ່ວຍຄົນນີ້ ປະຕິບັດໜ້າທີ່ແທນໃຫ້ທ່ານ ແລະເປັນຕົວແທນໃຫ້ຄົນອື່ນໃນໃບສະໝັກຂອງທ່ານໃນການດຳເນີນການດັ່ງຕໍ່ໄປນີ້:

- ເຂົ້າຫາຂໍ້ມູນຂອງທ່ານເພື່ອໃຫ້ບໍລິການແກ່ລູກຄ້າ
- ພິມຂໍ້ມູນກ່ຽວກັບໂຕເອງແລະຄົວເຮືອນຂອງທ່ານເຂົ້າໄປໃນໃບສະໝັກ
- ເປັນຕົວແທນຂອງທ່ານໃນການສົ່ງໃບສະໝັກ
- ເລືອກແຜນສຸຂະພາບທີ່ເໝາະສົມ
- ເລືອກແລະນຳໃຊ້ເງິນສິນເຊື່ອອາກອນເບ້ຍປະກັນລ່ວງໜ້າ
- ໃນກໍລະນີທີ່ມີນາຍໜ້າ, ໃຫ້ເຂົ້າຫາລາຍລະອຽດຂອງບັນຊີ ກັບຜູ້ຖືປະກັນສຸຂະພາບ ທີ່ທ່ານໄດ້ລົງທະບຽນໄປແລ້ວ.

ທ່ານຍັງໄດ້ອະນຸຍາດໃຫ້ຜູ້ຊ່ວຍຄົນນີ້ຈັດຫາ ແລະເບິ່ງຂໍ້ມູນຂອງທຸກຄົນທີ່ທ່ານໃສ່ຊື່ຢູ່ໃນໃບສະໝັກ. ຜູ້ສະໝັກຂໍ MNsure ຫຼືຜູ້ຊ່ວຍເປັນຕົວແທນຂອງຜູ້ສະໝັກ ຫຼືສະມາຊິກໃນຄົວເຮືອນ, ຜູ້ທີ່ຢູ່ພາຍໃຕ້ການດູແລ, ລູກຈ້າງ ຫຼືບຸກຄົນອື່ນໆໃນການຈັດຫາ ແລະ ເບິ່ງຂໍ້ມູນພິສູດວ່າພວກເຂົາໄດ້ຮັບອະນຸຍາດໃນເລື້ອງກ່ຽວກັບຂໍ້ມູນ, ຫຼື ແມ່ນຜູ້ປົກຄອງທີ່ຖືກຕ້ອງຕາມກົດໝາຍ, ຫຼືຖ້າບໍ່ດັ່ງນັ້ນ ການອະນຸຍາດໃຫ້ເຂົ້າ ແລະສົ່ງຂໍ້ມູນ, ກໍ່ຈະຕ້ອງໄດ້ຮັບການເຫັນດີເພື່ອປ້ອງກັນໃຫ້ມີຄວາມປອດໄພ. ບຸກຄົນທີ່ເບິ່ງແລະສົ່ງຂໍ້ມູນໃນນາມບຸກຄົນອື່ນ ຍັງເຫັນດີນຳໃຊ້ຂໍ້ມູນທີ່ສາມາດລະບຸຕົວຕົນຂອງບຸກຄົນ ໂດຍຈຸດປະສົງໃນການປະກອບໃບສະໝັກໃຫ້ຮຽບຮ້ອຍຫຼືຕາມການອະນຸຍາດຂອງກົດໝາຍຂອງລັດ ຫຼື ລັດຖະບານກາງ ແລະ ເພື່ອປົກປ້ອງຂໍ້ມູນບໍ່ໃຫ້ຄົນອື່ນເຂົ້າເບິ່ງ, ນຳໃຊ້, ແກ້ໄຂ, ທຳລາຍ, ລັກລອບ ຫຼື ເປີດເຜີຍຖ້າບໍ່ໄດ້ຮັບອະນຸຍາດ. ຂໍ້ມູນທີ່ຢູ່ໃນໃບສະໝັກຂອງທ່ານເປັນຂໍ້ມູນຄວາມລັບ.

ຄລິກໃສ່ “Confirm”, ໝາຍວ່າ ທ່ານອະນຸຍາດໃຫ້ຜູ້ຊ່ວຍຄົນນີ້ ເອົາຂໍ້ມູນກ່ຽວກັບໃບສະໝັກຂອງທ່ານ ແລະ ດຳເນີນການກ່ຽວກັບເລື່ອງຕ່າງໆໃນໃບສະໝັກນີ້, ລວມທັງເຊັນໃສ່ໃນໃບສະໝັກຂອງທ່ານຕາງໜ້າທ່ານ ແລະ ເປັນຕົວແທນຂອງທ່ານໃນການລົງທະບຽນໃສ່ໃນແຜນສຸຂະພາບທີ່ເໝາະສົມ.

ຄລິກໃສ່ “Confirm”, ໝາຍວ່າ ທ່ານຮັບຮູ້ວ່າທ່ານຍັງຄົງມີຄວາມຮັບຜິດຊອບໃນການປະຕິບັດໃຫ້ທັນກັບກຳນົດເວລາໃນການລົງທະບຽນຂໍການຄຸ້ມຄອງ.

ກ່ອນຈະຮັບເອົາ, ກະລຸນາທົບທວນ ການເຕືອນຄວາມເປັນສ່ວນຕົວ ຂອງ MNsure (MNsure Privacy Warnings), ຊຶ່ງອະທິບາຍຈຸດປະສົງ ແລະ ຄວາມຕັ້ງໃຈທີ່ຈະນຳໃຊ້ ສຳລັບການຮວບຮວມຂໍ້ມູນທີ່ເປັນຄວາມລັບ ໃນໃບສະໝັກຂອງທ່ານ ແລະ ເຫດຜົນຕ່າງໆໃນການປະຕິເສດໃຫ້ຂໍ້ມູນ. ການເຕືອນຄວາມເປັນສ່ວນຕົວ ຍັງກຳນົດບັນດາສິດທິ ແລະ ບຸກຄົນຕ່າງໆກັບບຸກຄົນທີ່ອາດຈະໄດ້ຮັບຂໍ້ມູນຂອງທ່ານ ແລະ MNsure ຈະເກັບຮັກສາຂໍ້ມູນຂອງທ່ານໄດ້ດົນຊ່ຳໃດ. ຂໍ້ມູນເພີ່ມເຕີມກ່ຽວກັບສິດທິຄວາມເປັນສ່ວນຕົວ ແລະ ໜ້າທີ່ຮັບຜິດຊອບຕ່າງໆແມ່ນມີຢູ່ໜ້າ (Terms and Privacy).

ທ່ານສາມາດສິ້ນສຸດການມອບອຳນາດນີ້ໄດ້ຕະຫຼອດເວລາ ໂດຍຜ່ານທາງ MNsure ອອນລາຍ໌ ຂອງທ່ານ ຫຼື ໂດຍໂທໄປຫາສູນປະຊາສຳພັນຂອງ MNsure (MNsure Contact Center).

ຖ້າທ່ານບໍ່ຕ້ອງການມອບອຳນາດໃຫ້ຜູ້ຊ່ວຍຄົນນີ້ໃນການດຳເນີນການເຫຼົ່ານີ້, ກະລຸນາຄລິກໃສ່ “Cancel” (ຍົກເລີກ).